## ການຄວບຄຸມເບິ່ງແຍງ

ເດັກນ້ອຍຕ້ອງການການຄວບຄຸມເບິ່ງແຍງທີ່ເໝາະສົມ. ຈົ່ງເລືອກຄັດແນ່ກ່ຽວກັບວ່າແມ່ນໃຜທີ່ທ່ານຈະເລືອກເອົາເພື່ອຈະເບິ່ງແຍງ ແລະ ດູແລລູກຂອງທ່ານ.

ບາງສິ່ງບາງຢ່າງທີ່ທ່ານຈະເກັບໃສ່ໃຈໄວ້ໃນເວລາທ່ານເລືອກເອົາຜູ້ເບິ່ງແຍງດູແລ:

- ທ່ານຮູ້ຈັກບຸກຄົນນີ້ດົນນານເທົ່າໃດແລ້ວ?
- ທ່ານຮູ້ຈັກແນວໃດແດ່ກ່ຽວກັບວ່າບຸກຄົນນີ້ເຮັດນຳເດັກນ້ອຍຢ່າງໃດ?
- ລູກຂອງທ່ານຈະຮູ້ສຶກສະບາຍໃຈໄດ້ເທົ່າໃດນຳບຸກຄົນນີ້?
- ທ່ານຮູ້ສຶກສະບາຍໃຈໄດ້ເທົ່າໃດນຳບຸກຄົນນີ້?
- ທ່ານຈະຖືກຍິນດີຕ້ອນຮັບໃຫ້ແວ່ມາໄດ້ທຸກໆເວລາບໍ່ເພື່ອຈະພົບລູກຂອງທ່ານ?
- ພໍ່ແມ່ຄົນອື່ນເວົ້າແນວໃດແດ່ກ່ຽວກັບບຸກຄົນນີ້ເບິ່ງແຍງດູແລເດັກນ້ອຍໄດ້ຢ່າງໃດ?

ບາງເທື່ອການລ່ວງລະເມີດທາງເພດເກີດຂຶ້ນໄດ້ແມ້ແຕ່ເມື່ອເວລາພວກເຮົາໄດ້ເຮັດດີທີ່ສຸດທີ່ພວກເຮົາສາມາດເຮັດໄດ້ແລ້ວເພື່ອຈະປ້ອງກັນມັນ. ຖ້າຫາກວ່າເດັກນ້ອຍສະແດງໃຫ້ເຫັນແນວໃດແນວນຶ່ງຂອງສິ່ງຊີ້ບອກດັ່ງຕໍ່ລົງໄປນີ້, ການລ່ວງລະເມີດທາງເພດອາດຈະເປັນສາເຫດໄດ້. ການປະພຶດເຫລົ່ານີ້, ເຖິງຢ່າງໃດກໍ່ຕາມ, ຕ້ອງໄດ້ເບິ່ງໃຫ້ຄັກໆເພື່ອຈະພິຈາຣະນາເບິ່ງວ່າສິ່ງໃດເປັນບັນຫາໃຫ້ເດັກນ້ອຍ.

- ການປະພຶດແບບຖອນຕົວ ຫລື ຣົບກວນທີ່ສຸດ.
- ການປະພຶດທາງເພດທີ່ບໍ່ເໝາະສົມຕາມການຈະເຣີນເຕີບຕົວ.
- ການປະພຶດແບບທຳລາຍຕົວເອງ.
- ການປ່ຽນແປງຢ່າງກະທັນຫັນ, ທີ່ບໍ່ສາມາດອະທິບາຍໄດ້ທຸກໆຢ່າງໃນການປະພຶດຂອງເດັກ.
- ຄວາມຢ້ານກົວຫລາຍເກີນໄປ.
- ຄວາມຕື່ນຕົວຫລາຍເກີນໄປ (ເຊັ່ນວ່າ, ຄວາມງຸນງົງ, ຄວາມອຸກອັ່ງ, ຄວາມຕຶງຄຽດຫລາຍໂພດ).

ການລ່ວງລະເມີດທາງເພດຂອງເດັກນ້ອຍບໍ່ແມ່ນບັນຫາທີ່ທ່ານຕ້ອງການທີ່ຈະປະເຊີນໜ້າຄົນດຽວ. ມັນສຳຄັນທີ່ຈະໄດ້ຮັບຄວາມຊ່ວຍເຫລືອສຳລັບຕົວທ່ານເອງ ແລະ ສຳລັບລູກຂອງທ່ານ. ໃຫ້ພິຈາຣະນາເບິ່ງວ່າແມ່ນໃຜຢູ່ໃນຄອບຄົວຂອງທ່ານ, ໂຮງຮຽນ ຫລື ຢູ່ໃນຄຸ້ມທີ່ທ່ານສາມາດເວົ້ານຳໄດ້ເພື່ອຈະເອົາຣາຍລະອຽດເພີ້ມເຕີມ ແລະ ການອູ້ມຊູ. ຈື່ໄວ້ວ່າ, ທ່ານຍັງສາມາດໂທຣະສັບໄປຫາສູນກາງຊ່ວຍເຫລືອການທຳຮ້າຍທາງເພດຂອງຄິງຄາວຕີ King County Sexual Assault Resource Center.

ທ່ານສາມາດກະທຳໄດ້ສຳລັບລູກຂອງທ່ານ!

King County
Sexual Assault
Resource Center

ສາຍໂທຣະສັບຊ່ວຍເຫລືອການທຳຮ້າຍທາງເພດຕລອດ 24 ຊົ່ວໂມງ

**1.800.825.7273**

*ເລກໂທຟຣີຢູ່ໃນຣັດວໍຊິງຕັນພາກຕາເວັນຕົກເທົ່ານັ້ນ*


King County Sexualt Assault Resource Center
PO Box 300, Renton, WA 98057
Tel. 425-226-5062
*Business line(Voice/TTY)*

www.KCSARC.org



KCSARC ໄດ້ລົງທະບຽນພາຍໃຕ້ກົດໝາຍ Washington State Charitable Solicitation Act (Chapter 19.09 RCW) ແລະ ຣາຍລະອຽດກ່ຽວຂ້ອງກັບວຽກງານການເງິນຂອງພວກເຮົາຈະມີໄວ້ໃຫ້ໂດຍການຕິດຕໍ່ມາຫາຫ້ອງການຂອງພວກເຮົາ ຫລື ຫ້ອງການຂອງເລຂາຂອງຣັດ.86% ຂອງຣາຍໄດ້ຈະຖືກນຳມາໃຊ້ສຳລັບຈຸດປະສົງການກຸສົນ.

ສະມາຊິກຂອງ Women's Funding Alliance ເຊື່ອຖືໄດ້ໂດຍ Office of Crime Victims Advocacy.

006-ED REV. 08/03
LAOTIAN

Translation and DTP provided by
Dynamic Language Center • www.dlc-usa.com


# A.C.T.

## ສຳລັບລູກຂອງທ່ານ

King County
Sexual Assault
Resource Center

## ການເປັນພໍ່ແມ່

ການເປັນພໍ່ແມ່ສາມາດເປັນວຽກງານທີ່ຕໍ່ສູ້, ຕື່ນເຕັ້ນ ແລະ ຕອບສນອງທີ່ສຸດທີ່ທ່ານເຄີຍມີມາ...ແລະ ມັນຈະເປັນສິ່ງສຳຄັນທີ່ສຸດ. ມັນຍັງສາມາດເປັນວຽກງານທີ່ໜ້າຢ້ານກົວທີ່ສຸດ, ເຫລືອໃຈ ແລະ ເຫລືອລົ້ນທີ່ສຸດຢູ່ໃນໂລກນີ້. ຄວາມຈິງແມ່ນວຽກງານທີ່ມີຄວາມໝາຍທຸກໆຢ່າງເໝືອນວ່າຈະເຫລືອລົ້ນໃນບາງເວລາເທົ່ານັ້ນ. ເພາະສະນັ້ນແລ້ວຣາຍລະອຽດ, ການອູ້ມຊູ ແລະ ການໃຫ້ກຳລັງໃຈແມ່ນຈຳເປັນເພື່ອຈະຊ່ວຍເຫລືອພວກເຮົາທັງໝົດໃຫ້ປະສົບຜົນສຳເຣັດໄດ້ຫລາຍກວ່າເກົ່າ.

ແນວນຶ່ງຂອງອັນຕຣາຍທີ່ເດັກນ້ອຍປະເຊີນໜ້າຢູ່ໃນໂລກນີ້ແມ່ນການລ່ວງລະເມີດທາງເພດຂອງເດັກນ້ອຍ. ມັນເປັນຕາໜ້າກົວທີ່ຈະຄິດກ່ຽວກັບການລ່ວງລະເມີດທາງເພດ ແລະ ລູກຂອງທ່ານເອງ. ມັນສາມາດເປັນ ທີ່ໜ້າເສັຽໃຈໂດຍສະເພາະຖ້າຫາກວ່າທ່ານໄດ້ຖືກເຈັບປວດແນວນີ້. ໃນຖານະເປັນພໍ່ແມ່ຂອງເດັກໜຸ່ມ, ທ່ານສາມາດເຣັດໄດ້ຫລາຍໆ ແນວເພື່ອຈະເອົາຄວາມປອດພັຍໃຫ້ລູກສາວ ຫລື ລູກຊາຍຂອງທ່ານ ແລະ ລຸດຜ່ອນການສ່ຽງອັນຕຣາຍທີ່ລູກຂອງທ່ານຈະຖືກລ່ວງລະເມີດທາງເພດ.

## ການຮູ້ຈັກຮັບຮູ້

ໃຫ້ຮູ້ຈັກວ່າການລ່ວງລະເມີດທາງເພດຂອງເດັກນ້ອຍເກີດຂຶ້ນເລື້ອຍໆຫລາຍເກີນກວ່າຄົນສ່ວນຫລາຍຮູ້ແທ້. ຍິງສາວນຶ່ງໃນສາມຄົນ ແລະ ເດັກຊາຍນຶ່ງໃນຫ້າຄົນຈະຖືກທຳຮ້າຍທາງເພດກ່ອນອາຍຸ 16 ປີ. ສ່ວນຫລາຍແລ້ວ, ຜູ້ກະທຳຜິດຈະເປັນຄົນໃດຄົນນຶ່ງທີ່ເດັກນ້ອຍຮູ້ຈັກ ແລະ ຮັກໄຄ່. ການລ່ວງລະເມີດທາງເພດສາມາດເກີດຂຶ້ນໄດ້ໃນເວລາຍັງນ້ອຍໆຮອດເດັກທາຣົກ. ເດັກນ້ອຍສ່ວນຫລາຍແລ້ວບໍ່ປາກຈະບອກກ່ຽວກັບການລ່ວງລະເມີດ. ເຂົາເຈົ້າອາດຈະຮູ້ສຶກຢ້ານກົວ, ອັບອາຍ ຫລື ຮູ້ສຶກຜິດ; ຫລື ເຂົາເຈົ້າອາດຈະບໍ່ມີຄຳເວົ້າທີ່ຈະເວົ້າອອກມາກ່ຽວກັບການລ່ວງລະເມີດ. ເຂົາເຈົ້າອາດຈະຄິດວ່າຈະບໍ່ມີໃຜເຊື່ອ. ພວກເຮົາບໍ່ສາມາດທີ່ຈະຄາດໝາຍວ່າເດັກນ້ອຍຈະເປັນຜູ້ຮັບຜິດຊອບຄົນດຽວສຳລັບຄວາມປອດພັຍຂອງເຂົາເຈົ້າເອງ. ການແລກປ່ຽນຣາຍລະອຽດກ່ຽວກັບຄວາມປອດພັຍນຳເດັກນ້ອຍສາມາດຊ່ວຍເຫລືອລຸດຜ່ອນຄວາມອ່ອນຕໍ່ອັນຕຣາຍຂອງເຂົາເຈົ້າລົງ ແລະ ເພີ້ມໂອກາດທີ່ເຂົາເຈົ້າຈະເວົ້າກ່ຽວກັບສິ່ງທີ່ເປັນບັນຫາຂອງເຂົາເຈົ້າຂຶ້ນ.

## ການຕິດຕໍ່ເວົ້າລົມກັນ

- ບອກໃຫ້ລູກຂອງທ່ານຮູ້ຈັກວ່າທ່ານຫ່ວງໄຍນຳເຂົາເຈົ້າ.
- ເວົ້າໃຫ້ຄຳໝັ້ນນຳລູກຂອງທ່ານດ້ວຍຄວາມເວົ້າເຊັ່ນວ່າ "ຂ້ອຍຈະເຣັດດີທີສຸດທີ່ຈະຮັກສາໃຫ້ເຈົ້າປອດພັຍ".
- ເວົ້າລົມນຳ ແລະ ຟັງລູກຂອງທ່ານສເມີ.
- ຍິນດີຮັບຟັງຄວາມພະຍາຍາມຂອງລູກທ່ານທີ່ຈະບັນລະຍາຍຄວາມຮູ້ສຶກ, ອອກປາກສຽງຄວາມຂ້ອງໃຈ ແລະ ສອບຖາມຄຳຖາມ.
- ເວົ້າຄ່ອຍໆເບົາໆ ແລະ ໃນແບບບໍ່ໃຫ້ຢ້ານກົວໃນເວລາສິດສອນກ່ຽວກັບການປ້ອງກັນການລ່ວງລະເມີດທາງເພດຂອງເດັກນ້ອຍ.

## ຄວາມຊຳນານນຳການສິດສອນ

- ສອນເດັກນ້ອຍກ່ຽວກັບສິດທິຂອງເຂົາເຈົ້າໃນສິດສ່ວນຕົວ ແລະ ຄວາມປອດພັຍ.
- ໃຫ້ກຳລັງໃຈເດັກນ້ອຍທີ່ຈະຮູ້ສຶກວ່າຮ່າງກາຍຂອງເຂົາເຈົ້າເປັນຂອງເຂົາເຈົ້າ.
- ເອົາຣາຍລະອຽດທີ່ຖືກຕ້ອງໃຫ້ເດັກນ້ອຍກ່ຽວກັບວ່າການແຕະຕ້ອງ ແລະ ການປະພຶດແນວໃດທີ່ເປັນການເໝາະສົມ ແລະ ບໍ່ເປັນການເໝາະສົມ, ບໍ່ກ່ຽວວ່າແມ່ນໃຜເປັນຜູ້ເຣັດ.
- ບອກເດັກນ້ອຍວ່າເຂົາເຈົ້າສາມາດເວົ້າ "ບໍ່" ຕໍ່ການແຕະຕ້ອງທີ່ບໍ່ເໝາະສົມ ແລະ ອູ້ມຊູສນັບສນູນເຂົາເຈົ້າເມື່ອເວລາເຂົາເຈົ້າເວົ້າວ່າ "ບໍ່".
- ສອນເດັກນ້ອຍໃຫ້ບອກຜູ້ໃຫຍ່ທີ່ເຊື່ອໃຈໄດ້ຖ້າຫາກວ່າເຂົາເຈົ້າຕ້ອງການຄວາມຊ່ວຍເຫລືອ ຫລື ວ່າບໍ່ເຂົ້າໃຈ.
- ວາງໃຊ້ຄວາມຊຳນານໃນຄວາມປອດພັຍ ແລະ ຫລຳຄືນຣາຍລະອຽດຂອງຄວາມປອດພັຍສເມີ.